ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*****************

ຄະນະກຳມະການຄົ້ນຄວ້າ
ສະເໜີການໃຫ້ອະໄພຍະໂທດຂັ້ນສູນກາງ

ເລກທີ...03.../ຄອກ
ນະຄອນຫຼວງວຽງຈັນ, ວັນທີ.31/05/2011

# ຄຳແນະນຳ

## ວ່າດ້ວຍການຄົ້ນຄວ້າສະເໜີການໃຫ້ອະໄພຍະໂທດປະຈຳປີ 2011

- ອີງຕາມ: ລັດຖະທຳມະນູນແຫ່ງ ສປປ ລາວ.
- ອີງຕາມ: ມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 37/ຄປຈ, ລົງວັນທີ 23/04/2010 ວ່າດ້ວຍການຈັດຕັ້ງປະຕິບັດວຽກງານຄົ້ນຄວ້າ ແລະ ສະເໜີການໃຫ້ອະໄພຍະໂທດແກ່ນັກໂທດ ປະຈຳປີ 2010 ແລະປີຕໍ່ໄປ.

ເພື່ອເປັນບ່ອນອີງໃຫ້ການຈັດຕັ້ງປະຕິບັດຕາມການຄົ້ນຄວ້າ ສະເໜີການໃຫ້ອະໄພຍະໂທດຫຼຸດຜ່ອນໂທດ ແລະ ປ່ອຍຕົວນັກໂທດ ໃນໂອກາດສະເຫຼີມສະຫຼອງວັນຊາດທີ 2 ທັນວາ 2011 ຄົບຮອບ 36 ປີ, ຄະນະກຳມະການຄົ້ນຄວ້າສະເໜີການໃຫ້ອະໄພຍະໂທດຂັ້ນສູນກາງ ຈຶ່ງໄດ້ແນະນຳລະອຽດດັ່ງລຸ່ມນີ້:

## I. ຈຸດປະສົງ ແລະ ຄາດໝາຍ.

1. ການຄົ້ນຄວ້າສະເໜີໃຫ້ອະໄພຍະໂທດແກ່ນັກໂທດ ແມ່ນການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍຂອງລັດເຮົາ ແລະ ແມ່ນການຈັດຕັ້ງປະຕິບັດແນວທາງນະໂຍບາຍດ້ານມະ ນຸດ ສະທຳຂອງພັກ ຕໍ່ຜູ້ຖືກດັດສ້າງ, ຢູ່ບັນດາຄ້າຍຄຸມຂັງຂອບເຂດທົ່ວປະເທດ.
2. ເພື່ອແນໃສ່ການສຶກສາອົບຮົມໃຫ້ແກ່ຍາດພີ່ນ້ອງ, ຜູ້ປົກຄອງຂອງພວກຖືກດັດສ້າງ ຮັບຮູ້ເຂົ້າໃຈແຈ້ງຕໍ່ແນວທາງນະໂຍບາຍຂອງພັກເຮົາ, ຕໍ່ລະບຽບກົດໝາຍຂອງລັດ ທີ່ມີຕໍ່ພວກນັກໂທດ ຊຶ່ງເປັນລູກ, ເປັນຜົວເມັຍ ແລະ ຍາດພີ່ນ້ອງຂອງຕົນ.
3. ເພື່ອເຮັດໃຫ້ສັງຄົມ ແລະ ສາກົນ ຮັບຮູ້ເຂົ້າໃຈແຈ້ງຕໍ່ແນວທາງມະນຸດສະທຳຂອງພັກເຮົາ, ຮັບຮູ້ເຂົ້າໃຈຕໍ່ລະບຽບກົດໝາຍຂອງລັດ ທີ່ໄດ້ປະຕິບັດຕໍ່ພວກນັກໂທດ ທັງຄົນລາວ ແລະ ຄົນຕ່າງປະເທດ.

## II. ບັນຊີລາຍຊື່ນັກໂທດ ມີການສະເໜີໃຫ້ອະໄພຍະໂທດຜ່ອນໂທດ ແລະ ປ່ອຍຕົວ

1/. ອະໄພຍະໂທດຫຼຸດຜ່ອນໂທດທົ່ວໄປ.

2/. ອະໄພຍະໂທດປ່ອຍຕົວ.

3/. ອະໄພຍະໂທດຜ່ອນໂທດຢາເສບຕິດ.

ການຄົ້ນຄວ້າຂື້ນບັນຊີນັກໂທດຜູ້ມີເງື່ອນໄຂໃຫ້ແຍກເປັນ 3 ບັນຊີ ຕາມຮ່າງບັນຊີທີ່ໄດ້ສົ່ງມາໃຫ້ພ້ອມນີ້ຄື: ບັນຊີສະເໜີອະໄພຍະໂທດຜ່ອນໂທດທົ່ວໄປ, ບັນຊີສະເໜີອະໄພຍະໂທດຜ່ອນໂທດຂໍ້ຫາຢາເສບຕິດ ແລະ ບັນຊີສະເໜີປ່ອຍຕົວ, ໃນເວລາເຮັດບັນຊີນັ້ນ ໃຫ້ແຍກຂໍ້ຫາການກະທຳຜິດເປັນກຸ່ມໆ ຕົວຢ່າງ: ກຸ່ມຂໍ້ຫາຊິງຊັບ, ປຸ້ນຊັບ ..., ກຸ່ມຂໍ້ຫາລັກຊັບ, ຍັກຍອກຊັບ... ກຸ່ມຂໍ້ຫາທຳລະຍົດຊາດ... ແລະອື່ນໆ...

## III. ເງື່ອນໄຂການສະເໜີຂໍຜ່ອນໂທດ ແລະ ປ່ອຍຕົວ

### ກ. ເງື່ອນໄຂການຜ່ອນໂທດ

1. ບັນດານັກໂທດ ທີ່ຖືກສານຕັດສິນລົງໂທດຕັດອິດສະລະພາບແຕ່ 5 ປີຂື້ນໄປ ຕ້ອງມີເງື່ອນໄຂຄື:

1.1 ນັກໂທດ ອາຍຸຕ່ຳກວ່າ 18 ປີໃນເວລາກະທຳຜິດ ຕ້ອງປະຕິບັດໂທດມາແລ້ວ 1/3 ຂອງໂທດທັງໝົດຕາມຄຳຕັດສິນຂອງສານ.

1.2 ນັກໂທດ ອາຍຸ 18 ປີຂື້ນໄປໃນເວລາກະທຳຜິດ ຕ້ອງປະຕິບັດໂທດມາແລ້ວ 1/2 ຂອງໂທດທັງ ໝົດຕາມຄຳຕັດສິນຂອງສານ.

2 ເປັນນັກໂທດດີເດັ່ນປະຈຳປີ ຖືກຄັດເລືອກໄດ້ປະເພດ 1 ຫຼື 2

3 ບໍ່ເປັນນັກໂທດ ທີ່ກະທຳຜິດໃນສະຖານບໍ່ເຂັດຫຼາບ (ຜ່ານການຕັດສິນຂອງສານປະຊາຊົນ)

4 ບໍ່ເປັນນັກໂທດ ທີ່ກະທຳຜິດໂທດຮ້າຍປ່າເຖື່ອນໃນເວລາກະທຳຜິດ.

### ຂ. ເງື່ອນໄຂສຳລັບນັກໂທດ ທີ່ສານຕັດສິນລົງໂທດຕັດອິດສະລະພາບຕະຫຼອດຊີວິດ ມີເງື່ອນໄຂດັ່ງນີ້:

1. ໄດ້ປະຕິບັດໂທດມາແລ້ວ 10 ປີ ຂື້ນເມືອ ບໍ່ຈຳແນກສະຖານການກະທຳຜິດ.
2. ເປັນນັກໂທດດີເດັ່ນປະຈຳປີມາຕະຫຼອດ ປະເພດ 1 ຫຼື 2
3. ບໍ່ແມ່ນນັກໂທດທີ່ກະທຳຜິດສະຖານບໍ່ເຂັດຫຼາບ ຕາມຄຳຕັດສິນຂອງສານ.

- <u>ຂໍ້ຫ້າມ.</u> ນັກໂທດທີ່ໄດ້ຮັບການຜ່ອນໂທດຈາກໂທດຕະຫຼອດຊີວິດ ມາເປັນໂທດມີກຳນົດແລ້ວ ບໍ່ໃຫ້ສະເໜີຂໍຜ່ອນໂທດອີກຢ່າງເດັດຂາດ.

### ຄ. ເງື່ອນໄຂການອະໄພຍະໂທດປ່ອຍຕົວທົ່ວໄປ

ນັກໂທດທົ່ວໄປ ຖືກສານຕັດສິນລົງໂທດຕັດອິດສະພາບແຕ່ 5 ປີຂື້ນໄປ ບໍ່ວ່າສະຖານການກະທຳຜິດໃດກໍ່ຕາມ ຕ້ອງມີເງື່ອນໄຂດັ່ງລຸ່ມນີ້:

1. ນັກໂທດດີເດັ່ນປະຈຳປີ ປະເພດ 1
2. ໂທດຍັງເຫຼືອປະຕິບັດ 2 ປີລົງມາ

3. ບໍ່ແມ່ນນັກໂທດກະທຳຜິດສະຖານບໍ່ເຂັດຫຼາບ ຕາມຄຳຕັດສິນຂອງສານ.

**ງ. ເງື່ອນໄຂການອະໄພຍະໂທດປ່ອຍຕົວ ສະເພາະຜູ້ສູງອາຍຸ ແລະ ຜູ້ເຈັບເປັນພະຍາດຮ້າຍແຮງມີເງື່ອນໄຂດັ່ງນີ້:**

1. ສຳລັບນັກໂທດ ຜູ້ທີ່ມີອາຍຸ 60 ປີ ຂຶ້ນໄປ ແລະ ມີສຸຂະພາບອ່ອນເພຍ ຊຶ່ງບໍ່ສາມາດປະຕິບັດໂທດຕໍ່ໄປໄດ້.
2. ເປັນພະຍາດຕິດແປດຮ້າຍແຮງ ບໍ່ສາມາດຢູ່ຮ່ວມກັບໝູ່ໄດ້.
3. ເປັນອຳມະພາດ ແລະ ພະຍາດອື່ນໆ ຫຼື ເຈັບເປັນໜັກ ຊຶ່ງຄະນະແພດຢັ້ງຢືນບໍ່ສາມາດປິ່ນປົວໃຫ້ດີໄດ້ ທັງບໍ່ສາມາດຊ່ວຍເຫຼືອຕົນເອງໄດ້.

- ໃນຂໍ້ 2 ແລະ 3 ຕ້ອງມີໃບຢັ້ງຢືນເປັນລາຍລັກອັກສອນຈາກຄະນະແພດ ຕາມກົດໝາຍກຳນົດໄວ້.

**ຈ. <u>ສຳລັບນັກໂທດ ຄູ່ຜົວ-ເມັຍ ຖືກໂທດທັງສອງຄົນ.</u>**

1. ເປັນຄູ່ຜົວເມັຍ ມີການກະທຳຜິດໃນສະຖານດຽວກັນ, ມີໂທດຕັດອິດສະລະພາບແຕ່ 5 ປີຂຶ້ນໄປ.
2. ເປັນຄູ່ຜົວເມັຍ ມີລູກນ້ອຍອາຍຸແຕ່ 10 ປີລົງມາ, ບໍ່ມີຍາດພີ່ນ້ອງເບິ່ງແຍງ ຫຼື ຄອບຄົວທຸກຍາກ.
3. **ເປັນຜົວ ຫຼື ເມັຍ ບໍ່ແມ່ນຫົວໂປ່ຕົວການໃນການກະທຳຜິດ.**
4. **ເປັນຜົວ ຫຼື ເມັຍ ມີການກະທຳຜິດໃນຫຼາຍສະຖານ. ແມ່ນໃຫ້ປະຕິບັດນະໂຍບາຍ ຕໍ່ຜູ້ທີ່ມີໂທດຕັດອິດ ສາລະພາບຕ່ຳກວ່າ.**

- **ຜູ້ທີ່ຈະໄດ້ຮັບການອະໄພຍະໂທດປ່ອຍຕົວຕາມເງື່ອນໄຂ ງ.1, ງ.2 ແລະ ງ.3 ຕ້ອງມີການຢັ້ງຢືນຈາກຄະນະແພດທີ່ຖືກແຕ່ງຕັ້ງເປັນທາງການ ແລະ ອຳນາດການປົກຄອງ. ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ສຳລັບນັກໂທດຄູ່ຜົວເມັຍ(ຄ.3)**

## IV. <u>ການປະກອບເອກະສານຕ່າງໆ.</u>

- **ນັກໂທດ ທີ່ມີເງື່ອນໄຂສະເໜີມາໃຫ້ອະໄພຍະໂທດຫຼຸດຜ່ອນໂທດ ແລະ ປ່ອຍຕົວ ຕ້ອງປະກອບເອກະສານດັ່ງລຸ່ມນີ້:**

1. ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ (ສຳເນົາ) ຜູ້ລະ 1 ສະບັບ ສຳລັບນັກໂທດສະເໜີໃໝ່.

2. ບົດສະຫຼຸບການຄັດເລືອກນັກໂທດດີເດັ່ນປະເພດ 1 ແລະ 2 ປະຈຳປີ ຂອງຄ້າຍດັດສ້າງ 1 ສະບັບ.

3. ຖ້ານັກໂທດ ທັງຜົວເມັຍ ຕ້ອງມີສຳເນົາປື້ມສຳມະໂນຄົວ 1 ສະບັບ.

4. ຜູ້ທີ່ເຈັບເປັນ ຕ້ອງມີໃບຢັ້ງຢືນຈາກຄະນະແພດ 1 ສະບັບ

## V <u>ສະເໜີໃຫ້ຄະນະກຳມະການຄົ້ນຄວ້າສະເໜີການໃຫ້ອະໄພຍະໂທດຂັ້ນກະຊວງປ້ອງກັນຄວາມສະຫງົບ,ກະຊວງປ້ອງກັນປະເທດ,ແຂວງ,ນະຄອນຫຼວງວຽງຈັນ ເອົາໃຈໃສ່ປະຕິບັດບາງວຽກງານດັ່ງລຸ່ມນີ້:</u>

1. ຈັດຕັ້ງການໂຄສະນາເຜີຍແຜ່ເງື່ອນໄຂການສະເໜີຫຼຸດຜ່ອນໂທດ ແລະ ປ່ອຍຕົວໃຫ້ແກ່ນັກໂທດໃນຂອບເຂດການຮັບຜິດຊອບຂອງຕົນໃຫ້ທົ່ວເຖິງ ພ້ອມທັງປຸກລະດົມຍາດພີ່ນ້ອງຂອງນັກໂທດ ຊຳລະຄ່າເສັຍຫາຍທາງແພ່ງ ຫຼື ຄ່າປັບໄໝຕາມຄຳຕັດສິນຂອງສານ.

2. ໃຫ້ຄົ້ນຄວ້າຂຶ້ນບັນຊີລາຍຊື່ນັກໂທດ ຜູ້ທີ່ມີເງື່ອນໄຂໃນຄຳແນະນຳສະບັບນີ້ ໃຫ້ທັນກຳນົດເວລາຄື: ໃຫ້ສົ່ງບັນຊີລາຍຊື່ດັ່ງກ່າວ ພ້ອມບັນດາເອກະສານຕ່າງໆທີ່ກຳນົດມານັ້ນ ໃຫ້ຄະນະກຳມະການຄົ້ນຄວ້າສະເໜີໃຫ້ອະໄພຍະໂທດຂັ້ນສູນກາງ ກ່ອນວັນທີ 29/07/2011.

3. ພາຍຫຼັງໄດ້ຈັດຕັ້ງປະຕິບັດວຽກງານການໃຫ້ອະໄພຍະໂທດສຳເລັດແລ້ວ ໃຫ້ຄະນະກຳມະການຄົ້ນຄວ້າສະເໜີການໃຫ້ອະໄພຍະໂທດຂັ້ນຂອງຕົນ ຈົ່ງໄດ້ສະຫຼຸບດ້ານດີ, ດ້ານອ່ອນ ແລະ ຖອດຖອນບົດຮຽນ ແລ້ວສົ່ງບົດສະຫຼຸບດັ່ງກ່າວ ໃຫ້ຄະນະກຳມະການຄົ້ນຄວ້າການສະເໜີໃຫ້ອະໄພຍະໂທດຂັ້ນສູນກາງ ໃນເວລາອັນຄວນ.

4. ໃນເວລາການຈັດຕັ້ງປະຕິບັດຕົວຈິງ ມີບັນຫາໃດທີ່ບໍ່ເຂົ້າໃຈລະອຽດ ຫຼື ພົບຄວາມຫຍຸ້ງຍາກ ໃຫ້ຕິດຕໍ່ພົວພັນ ກັບກົມກວດກາຄ້າຍຄູມຂັງດັດສ້າງ ອົງການໄອຍະການປະຊາຊົນສູງສຸດ.
ໂທລະສັບ: ( 021)353 697; (021) 353 680; (021) 353 861; (020) 99 801 242.

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ
ປະທານຄະນະກຳມະການຄົ້ນຄວ້າອະໄພຍະໂທດຂັ້ນສູນກາງ

ລິນພັນ ແພງຄຳມີ